ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ອີທີແອລ ຈຳກັດ

ສະຫະກອນ ອອມຊັບ-ສິນເຊື່ອ ອທອ

ເລກທີ 162./ສອສ.ອທອ

ວັນທີ 29 NOV 2022

# ແຈ້ງການ

ເຖິງ: ບັນດາພະແນກ, ອທອ ສາຂາ ແຂວງ ແລະ ສະມາຊິກ ສອສ.

ເລື່ອງ: ການໃຫ້ກູ້ຢືມ, ການປ່ຽນແປງຮຸ້ນງວດ12 ເດືອນປີ 2022

- ອີງຕາມ ກົດລະບຽບພາຍໃນຂອງສະຫະກອນອອມຊັບ-ສິນເຊື່ອ ອທອ ສະບັບເລກທີ:005/ສອສ, ລົງວັນທີ 28/01/2013.

ຜູ້ອຳນວຍການສະຫະກອນອອມຊັບ-ສິນເຊື່ອ ອທອ ຂໍຖືເປັນກຽດແຈ້ງມາຍັງບັນດາພະແນກການ ,ອທອ ສາຂາ ແຂວງ ເພື່ອແຈ້ງຕໍ່ສະມາຊິກ ສອສ ທຸກທ່ານຊາບກ່ຽວກັບການເພີ່ມ, ຫຼຸດ, ຖອນຮຸ້ນ ໃນ ງວດ12 ເດືອນ ປີ 2022 ດັ່ງນີ້ :

1. **ການກູ້ຢືມ:**

ສະຫະກອນອອມຊັບ-ສິນເຊື່ອ ອທອ ຈະໄດ້ຢຸດການປ່ອຍກູ້ຊົ່ວຄາວ ເຊິ່ງເລີ່ມແຕ່ວັນທີ 20-30/12/2022 ເພື່ອກະກຽມການສະຫຼຸບປິດບັນຊີປະຈຳປີ ແລະ ຈະໄດ້ດຳເນີນການເປີດການປ່ອຍກູ້ເປັນປົກກະຕິ ແຕ່ວັນທີ 03/01/2023 ເປັນຕົ້ນໄປ.

2. **ການປ່ຽນແປງຮຸ້ນ:**

2.1 ເປີດຮັບສະໝັກສະມາຊິກ ສອສ ໃໝ່ ໂດຍຜູ້ທີ່ຈະເຂົ້າເປັນສະມາຊິກຕ້ອງມີເງື່ອນໄຂດັ່ງນີ້: ພະນັກງານຖາວອນ, ພະນັກງານທົດລອງ ວຽກ.

2.2 ການຖອກຮຸ້ນ:ສະມາຊິກຜູ້ໜຶ່ງຕ້ອງຖອກຮຸ້ນຕ່ຳສຸດ 1 ຮຸ້ນ= 10,000 ກີບ/ຄົນ/ເດືອນ ແລະ ສູງສຸດ 50 ຮຸ້ນ = 500,000 ກີບ/ຄົນ/ເດືອນ.

2.3 ການຖອນຮຸ້ນ: ສະມາຊິກຕ້ອງຮັກສາຮຸ້ນໄວ້ນຳ ສອສ ບໍ່ໃຫ້ຫຼຸດ10 ຮຸ້ນ =100,000 ກີບ.

2.4 ສະມາຊິກຜູ້ທີ່ມີຈຸດປະສົງຕ້ອງການຖອນຮຸ້ນ ຫຼື ເພີ້ມ/ຫຼຸດ ແມ່ນໃຫ້ປະກອບແບບຟອມທີ່ ສອສ ກຳນົດແລ້ວສົ່ງໃຫ້ ທ່ານ ນ. ຈັນພອນ ພາລະໂກສິນ ໂດຍຜ່ານຊ່ອງທາງEmail:etlscc2018@gmail.com ຫຼື ພົວພັນເບີໂທ 020 28789539

2.5 ກຳນົດເວລາຮັບແບບຟອມເລີ່ມແຕ່ວັນທີ 16/12/2022-23/12/2022, ສະມາຊິກ ສອສ ສາມາດກວດຮຸ້ນສະສົມໄດ້ທີ່ທາງ Website : scc.etllao.com

2.6 ກໍລະນີພະນັກງານຂອງທ່ານຫາກອອກໄປປະຕິບັດວຽກງານຢູ່ຕ່າງແຂວງໃນຊ່ວງໄລຍະປະກາດການເພີ່ມ/ ຫຼຸດ ແລະ ສະໝັກໃໝ່ ແມ່ນໃຫ້ທ່ານພົວພັນຫາສະມາຊິກຂອງທ່ານໃຫ້ປະກອບແບບຟອມໃຫ້ທັນເວລາດັ່ງກ່າວ ຖ້າຊັກຊ້າຈະຖືວ່າສະຫຼະສິດ.

2.7 ຄ່າທຳນຽມການປ່ຽນແປງຮຸ້ນ 5,000ກີບ/ສະບັບ.

2.8 ຄ່າທຳນຽມສະໝັກສະມາຊິກ ສອສ ໃໝ່ 10,000 ກີບ/ສະບັບ

3. <u>ວິທີຈັດຕັ້ງປະຕິບັດ:</u>

3.1 ການໂອນເງິນຖອນຮຸ້ນ, ຫຼຸດຮຸ້ນ ສອສ ຈະດຳເນີນການຕາມເລກບັນຊີ ທະນາຄານຂອງສະມາຊິກທີ່ໄດ້ແຈ້ງໃຫ້ ສອສ ຄື: ສາຂານະຄອນຫຼວງວຽງຈັນ, ສາຂາແຂວງ ແມ່ນໂອນຜ່ານເລກບັນຊີ ທະນາຄານ ພັດທະນາລາວ ຫຼື ການຄ້າຕ່າງປະເທດ ຫຼື ລາວທວຽດ. ຫຼີກເວັ້ນການໂອນເຂົ້າບັນຊີຂອງຜູ້ອື່ນ ແລະ ບັນຊີຂອງທະນາຄານ ພົງສະຫວັນ ເພາະຈະໄດ້ເສຍຄ່າໂອນແຕ່ລະຄັ້ງ.

3.2 ສຳລັບ ສະມາຊິກໃໝ່ ໃຫ້ສົ່ງເລກບັນຊີທະນາຄານທີ່ອອກຊື່ຂອງຜູ້ກ່ຽວມາດ້ວຍ.

3.3 ສຳລັບຄ່າທຳນຽມ ສະໝັກສະມາຊິກໃໝ່ ແລະ ຄ່າທຳນຽມໃນການປ່ຽນແປງຮຸ້ນ ແມ່ນ ສອສ ຈະຕັດໃນ ເງິນເດືອນປະຈຳເດືອນ 01/2023.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

**ຜູ້ອຳນວຍການ ສອສ**

**ໄຊສົມພາຍ ສີສຳພັນໄຊ**